**ສົມໂພດພຣະຈິດເຈົ້າສະເດັດລົງມາ**

**ວັນທີ 9 ມິຖຸນາ 2019**



**ພຣະວໍລະສານໂດຍນັກບຸນຢວງ 20, 19-23**

ແລງວັນນັ້ນເອງ, ທີ່ເປັນວັນຕົ້ນສັບປະດາ, ປະຕູຫ້ອງບ່ອນພວກສາວົກປະຊຸມກັນຢູ່ປິດໝົດທຸກປ່ອງຍ້ອນຢ້ານພວກຢູເດວ. ພຣະເຢຊູເຈົ້າສະເດັດມາຢືນຢູ່ກາງພວກເຂົາແລ້ວກ່າວແກ່ພວກເຂົາວ່າ: ສັນຕິສຸກຈົ່ງມີແກ່ພວກເຈົ້າ. ເມື່ອໄດ້ກ່າວດັ່ງນັ້ນແລ້ວພຣະອົງໄດ້ຊົງສຳແດງພຣະຫັດແລະພຣະສີຂ້າງໃຫ້ພວກເຂົາເຫັນ; ພວກສາວົກຈຶ່ງຮູ້ສຶກຍິນດີດ້ວຍໄດ້ເຫັນພຣະອົງເຈົ້າ.

ພຣະອົງຍັງຊົງກ່າວແກ່ພວກເຂົາອີກວ່າ: ສັນຕິສຸກຈົ່ງມີແກ່ພວກເຈົ້າ. ພຣະບິດາໄດ້ໃຊ້ເຮົາມາແນວໃດເຮົາກໍໃຊ້ພວກເຈົ້າໄປແນວນັ້ນດ້ວຍ. ເມື່ອກ່າວແລ້ວ, ພຣະອົງກໍໄດ້ຊົງເປົ່າໃສ່ພວກເຂົາແລ້ວກ່າວວ່າ: ຈົ່ງຮັບພຣະຈິດເຈົ້າ. ພວກເຈົ້າຈະໂຜດຍົກບາບໃຫ້ຜູ້ໃດ ບາບຂອງຜູ້ນັ້ນກໍຈະຫລຸດພົ້ນໄປ. ພວກເຈົ້າຈະໜ່ວງຈ່ອງບາບຂອງຜູ້ໃດໄວ້ ບາບຂອງຜູ້ນັ້ນກໍຈະຄ້າງຄາຢູ່.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢຮ 20, 19-23**

ວັນນີ້ແມ່ນຄົບຮອບຫ້າສິບວັນຫລັງຈາກພຣະເຢຊູເຈົ້າໄດ້ກັບເປັນຄືນມາຈາກພວກຜູ້ຕາຍ. ເປັນວັນທີ່ພຣະກຣິສຕະຈັກສົມໂພດພຣະຈິດເຈົ້າສະເດັດລົງມາ. ຍ້ອນພຣະເຢຊູເຈົ້າໄດ້ສະເດັດຂຶ້ນສະຫວັນກັບຄືນເມືອຫາພຣະບິດາເພື່ອຈັດຕຽມບ່ອນໄວ້ໃຫ້ພວກເຮົາ. ພຣະອົງບໍ່ຢາກໃຫ້ພວກເຮົາຕ້ອງເປັນກຳພ້າ. ດັ່ງນັ້ນ, ພຣະອົງຈຶ່ງສົ່ງພຣະຈິດຂອງພຣະອົງລົງມາເພື່ອຢູ່ນຳພວກເຮົາຈົນເຖິງວັນສິ້ນໂລກ. ເປັນຫຍັງພວກສາວົກກໍຄືພວກເຮົາຈຶ່ງຕ້ອງການພຣະຈິດເຈົ້າ? ພຣະຈິດເຈົ້າຊ່ວຍພວກເຮົາຫຍັງ? ເມື່ອຮັບພຣະຈິດເຈົ້າແລ້ວຊີວິດຂອງພວກສາວົກກໍຄືພວກເຮົາໄດ້ປ່ຽນແປງຢ່າງໃດ?

ພວກເຮົາຈະພ້ອມກັນຊອກຫາຄຳຕອບໃນວາຈາຂອງພຣະເຈົ້າທີ່ພວກເຮົາໄດ້ຟັງໃນວັນສົມໂພດພຣະຈິດເຈົ້ານີ້. ນັກບຸນຢວງຜູ້ຂຽນພຣະວໍລະສານໄດ້ເລົ່າໃຫ້ພວກເຮົາເຫັນເຖິງສະພາບຊີວິດຂອງພວກສາວົກກ່ອນພຣະຈິດເຈົ້າສະເດັດລົງມາ. ພວກເຂົາໄດ້ຊຸມນຸມກັນຢູ່ໃນຫ້ອງແລະປິດປະຕູໄວ້ທຸກປ່ອງຍ້ອນມີຄວາມຢ້ານກົວ. ແຕ່ເມື່ອພຣະເຢຊູເຈົ້າປະຈັກມາທ່າມກາງພວກສາວົກ, ພຣະອົງໄດ້ເປົ່າລົມໃສ່ພວກເຂົາອັນເປັນເຄື່ອງໝາຍແຫ່ງການປະທັບຢູ່ຂອງພຣະຈິດເຈົ້າໃນພວກເຂົາ. ແທນທີ່ພວກສາວົກຈະລີ້ຊ່ອນຢູ່ໃນຫ້ອງ, ພວກເຂົາພັດຖືກສົ່ງໄປເພື່ອເປັນພິຍານເຖິງພຣະເຢຊູເຈົ້າຜູ້ກັບຄືນຊີບ. ແທນທີ່ພວກເຂົາຈະມີຄວາມຢ້ານກົວ, ພວກເຂົາພັດມີຄວາມຍິນດີຍ້ອນໄດ້ເຫັນພຣະເຢຊູເຈົ້າ.

ມີສິ່ງໜຶ່ງໃນພຣະວໍລະສານຂອງນັກບຸນຢວງທີ່ແຕກຕ່າງໄປຈາກພຣະວໍລະສານອື່ນຄືນັກບຸນຢວງຢາກຖ່າຍທອດໃຫ້ພວກເຮົາເຂົ້າໃຈເຖິງຄວາມເປັນໜຶ່ງດຽວລະຫວ່າງພຣະເຢຊູເຈົ້າແລະພຣະຈິດ. ດັ່ງນັ້ນ, ພຣະເຢຊູເຈົ້າຈຶ່ງເປົ່າລົມຂອງພຣະອົງໃສ່ພວກສາວົກ. ແລະສິ່ງທີ່ພວກສາວົກໄດ້ຮັບຜ່ານທາງພຣະຈິດຄື: ສັນຕິສຸກ, ຄວາມຍິນດີແລະການອະໄພໂທດໂຜດບາບ.

ປະສົບການຊີວິດຂອງພວກສາວົກກ່ອນແລະຫລັງຈາກໄດ້ຮັບພຣະຈິດເຈົ້ານີ້ ເປັນປະສົບການໃນຊີວິດຂອງພວກເຮົາເຊັ່ນດຽວກັນບໍ? ຫລືເວົ້າອີກຢ່າງ ອັນໃດທີ່ທຳໃຫ້ພວກເຮົາຢ້ານກົວ ແລະອັນໃດທີ່ທຳໃຫ້ພວກເຮົາມີສັນຕິສຸກຢູ່ໃນໃຈ? ແນ່ນອນ, ຄຳຕອບກໍຄືເມື່ອພວກເຮົາກະທຳຜິດຕໍ່ຄວາມຮັກຂອງພຣະເຈົ້າແລະຕໍ່ເພື່ອນພີ່ນ້ອງ, ພວກເຮົາກໍຢູ່ໃນຄວາມຢ້ານກົວແລະຂາດສັນຕິສຸກຢູ່ໃນໃຈ. ແຕ່ເມື່ອພວກເຮົາເປີດໃຈຂອງຕົນເພື່ອຕ້ອນຮັບພຣະຈິດເຈົ້າຜ່ານທາງສິນອະໄພບາບ, ໝາກຜົນຂອງພຣະຈິດທີ່ພວກເຮົາໄດ້ຮັບຄືຄວາມຍິນດີ ຍ້ອນໄດ້ຄືນດີກັບພຣະເຈົ້າ, ກັບຕົນເອງແລະກັບຄົນອື່ນ. ແລະການຄືນດີນີ້ທຳໃຫ້ພວກເຮົາມີສັນຕິສຸກຢ່າງແທ້ຈິງຢູ່ໃນໃຈ. ແລະສັນຕິສຸກຂອງພຣະເຈົ້າຢູ່ໃນໃຈພວກເຮົານີ້ເປັນເຄື່ອງໝາຍບອກໃຫ້ພວກເຮົາຮູ້ວ່າບາບໂທດຂອງພວກເຮົາໄດ້ຖືກອະໄພແລ້ວ.

ຂໍໃຫ້ພຣະຈິດເຈົ້າທີ່ສະເດັດລົງມາເໜືອພວກສາວົກວັນນີ້, ຈົ່ງສະເດັດລົງມາເໜືອພວກເຮົາເຊັ່ນດຽວກັນ, ເພື່ອອົງພຣະຈິດເຈົ້ານີ້ຈະໄດ້ຟື້ນຟູຊີວິດຈິດໃຈຂອງພວກເຮົາຄືນໃໝ່ແລະທຳໃຫ້ພວກເຮົາພົບກັບຄວາມຍິນດີແລະສັນຕິສຸກທີ່ແທ້ຈິງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ